ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງສະຫວັນນະເຂດ
ເຈົ້າແຂວງ

2019
ເລກທີ............/ຈຂ.ສຂ
ສະຫວັນນະເຂດ, ວັນທີ 11 NOV 2019

# ຂໍ້ຕົກລົງ
## ວ່າດ້ວຍການຄຸ້ມຄອງເຂດສະຫງວນທາງຫຼວງ
## ໃນແຂວງສະຫວັນນະເຂດ

- ອີງຕາມ ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ (ສະບັບປັບປຸງ) ເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015;
- ອີງຕາມ ກົດໝາຍ ວ່າດ້ວຍທາງຫຼວງ (ສະບັບປັບປຸງ) ເລກທີ 03/ສພຊ, ລົງວັນທີ 08 ພະຈິກ 2016;
- ອີງຕາມ ຄໍາສັ່ງຂອງລັດຖະມົນຕີ ກະຊວງ ໂຍທາທິການ ແລະ ຂົນສົ່ງ ເລກທີ 00469/ ຍທຂ, ລົງວັນທີ 29 ເມສາ 2013 ວ່າດ້ວຍ ການຄຸ້ມຄອງເຂດສະຫງວນທາງຫຼວງ;
- ອີງຕາມ ມະຕິກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາປະຊາຊົນແຂວງ ຊຸດທີ I ສະບັບເລກທີ 15/ສພ.ສຂ,ລົງວັນທີ 30 ກໍລະກົດ 2019 ວ່າດ້ວຍການຮັບຮອງເອົາຂໍ້ຕົກລົງຂອງທ່ານເຈົ້າແຂວງໆ ສະຫວັນນະເຂດ ວ່າດ້ວຍການຄຸ້ມຄອງເຂດສະຫງວນທາງຫຼວງໃນແຂວງສະຫວັນນະເຂດ.

**ເຈົ້າແຂວງໆ ສະຫວັນນະເຂດ ອອກຂໍ້ຕົກລົງ:**

### ໝວດທີ 1
### ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກໍານົດຫຼັກການ, ລະບຽບການ, ມາດຕະການ ແລະ ວິທີການຈັດຕັ້ງປະຕິບັດ ກ່ຽວກັບ ການຄຸ້ມຄອງ ປົກປັກຮັກສາ ເຂດສະຫງວນທາງຫຼວງ ໃຫ້ມີປະສິດທິພາບ, ປະສິດທິຜົນ ແນໃສ່ ຮັກສາຂອບເຂດສະຫງວນທາງຫຼວງໄວ້ ເພື່ອການພັດທະນາ ປ້ອງກັນຜົນກະທົບດ້ານເສດຖະກິດ-ສັງຄົມ ຕໍ່ການຂະຫຍາຍໂຄງລ່າງພື້ນຖານ ແລະ ສິ່ງອໍານວຍຄວາມສະດວກຕາມເສັ້ນທາງ, ຮັບປະກັນໃຫ້ມີຄວາມຍືນຍົງ, ເປັນລະບຽບຮຽບຮ້ອຍ, ສວຍງາມ, ມີສະພາບແວດລ້ອມທີ່ດີ, ສະດວກໃນການພັດທະນາ, ປະກອບສ່ວນເຂົ້າໃນການພັດທະນາ ເສດຖະກິດ-ສັງຄົມ ພາຍໃນແຂວງ ໃຫ້ມີຄວາມຈະເລີນສີວິໄລ ແລະ ຍຸຕິທໍາ.

**ມາດຕາ 2 ການຄຸ້ມຄອງເຂດສະຫງວນທາງຫຼວງ**

ການຄຸ້ມຄອງເຂດສະຫງວນທາງຫຼວງ ແມ່ນການກໍານົດເຂດຄຸ້ມຄອງ ເພື່ອສະຫງວນໄວ້ນໍາໃຊ້ ສໍາລັບກິດຈະການ ສາທາລະນະປະໂຫຍດ ເປັນຕົ້ນ ຮ່ອງລະບາຍນໍ້າ, ທາງຍ່າງ, ຂອບທາງ, ລະບົບຕະຄ່າຍໄຟຟ້າ, ນໍ້າປະປາ, ໂທລະຄົມ-ການສື່ສານ, ລະບົບຄວບຄຸມຄວາມປອດໄພໃນການຈະລາຈອນ, ຕົ້ນໄມ້ປະດັບ, ເຄື່ອງ

ປະດັບທາງ, ໄຟສັນຍານ ແລະ ອື່ນໆ ຢູ່ໜ້າດິນ, ເທິງໜ້າດິນ ແລະ ໃຕ້ດິນ ໃນຂອບເຂດພື້ນທີ່ສະຫງວນທາງຫຼວງແຕ່ລະປະເພດ ໃຫ້ຖືກຕ້ອງ ແລະ ສອດຄ່ອງຕາມລະບຽບກົດໝາຍ;

ການປົກປັກຮັກສາເຂດສະຫງວນທາງຫຼວງ ແມ່ນການຮັກສາພື້ນທີ່ເຂດສະຫງວນ ຢູ່ໜ້າດິນ, ເທິງໜ້າດິນ ແລະ ໃຕ້ດິນ ຕາມຂອບເຂດທີ່ກຳນົດໄວ້.

**ມາດຕາ 3 ອະທິບາຍຄຳສັບ**

1. ເຂດສະຫງວນທາງຫຼວງໝາຍເຖິງ ພື້ນທີ່ຮັກສາໄວ້ຢູ່ໜ້າດິນ, ເທິງໜ້າດິນ ແລະ ໃຕ້ດິນ ຕາມທີ່ກຳນົດໄວ້ເພື່ອນຳໃຊ້ເຂົ້າໃນກິດຈະການ ສາທາລະນະປະໂຫຍດ;
2. ຫຼັກໝາຍເຂດສະຫງວນທາງຫຼວງໝາຍເຖິງ ຫຼັກກຳນົດຈຸດຂອບເຂດພື້ນທີ່ ເຂດສະຫງວນຂອງທາງຫຼວງເຊິ່ງໄດ້ກຳນົດຈາກຈຸດໃຈກາງຂອງທາງແຕ່ລະປະເພດອອກໄປ ທັງສອງຂ້າງທາງ;
3. ທາງຫຼວງແຫ່ງຊາດໝາຍເຖິງ ທາງເຊື່ອມຈອດລະຫວ່າງແຂວງ ຫາ ແຂວງ, ເປັນທາງຍຸດທະສາດສາຍຫຼັກທີ່ຮັບໃຊ້ຜົນປະໂຫຍດຂອງຊາດ ໃນການພັດທະນາເສດຖະກິດ-ສັງຄົມ, ທັງເປັນແລວທາງເຊື່ອມຈອດກັບດ່ານສາກົນລະຫວ່າງປະເທດ ແລະ ອະນຸພາກພື້ນ;
4. ທາງຫຼວງແຂວງໝາຍເຖິງ ທາງເຊື່ອມຈອດ ລະຫວ່າງແຂວງ ຫາ ເມືອງ, ເທດສະບານເມືອງ ຫາ ເມືອງ ແລະ ເມືອງ ຫາ ບ້ານ, ກຸ່ມບ້ານ, ຈຸດສຸມທີ່ເປັນເຂດເປົ້າໝາຍພັດທະນາ ແລະ ເປັນທາງສາຍຫຼັກ ເພື່ອຮັບໃຊ້ຜົນປະໂຫຍດລວມຂອງແຂວງ;
5. ທາງຫຼວງເມືອງໝາຍເຖິງ ທາງເຊື່ອມຈອດ ຈາກເທດສະບານເມືອງ ຫາ ບ້ານ, ເມືອງ ຫາ ກຸ່ມບ້ານຈຸດສຸມ, ຈາກ ບ້ານ ຫາ ບ້ານ ທັງເປັນທາງສາຍຫຼັກທີ່ຮັບໃຊ້ຜົນປະໂຫຍດລວມຂອງເມືອງ;
6. ທາງຊົນນະບົດໝາຍເຖິງ ທາງຢູ່ເຂດນອກຕົວເມືອງ, ຫ່າງໄກສອກຫຼີກ, ມີປະລິມານການສັນຈອນຕ່ຳ, ເຊື່ອມຈອດ ລະຫວ່າງ ບ້ານ ຫາ ບ້ານ, ບ້ານ ຫາ ຈຸດສຸມ, ສະຖານທີ່ທຳການຜະລິດ, ການບໍລິການ, ແຫຼ່ງຊັບພະຍາກອນທຳມະຊາດ ທັງເປັນທາງຮັບໃຊ້ຜົນປະໂຫຍດລວມຂອງບ້ານ;
7. ທາງຕົວເມືອງໝາຍເຖິງ ທາງຢູ່ໃນເທດສະບານເມືອງ, ນະຄອນ ຕາມທີ່ກຳນົດໄວ້ໃນແຜນຜັງເມືອງ ແລະ ນະຄອນ;
8. ທາງສະເພາະໝາຍເຖິງ ທາງເຊື່ອມຈອດກັບເຂດສະເພາະໃດໜຶ່ງ ເຊັ່ນ: ເຂດຜະລິດກະສິກຳ, ອຸດສາຫະກຳ, ປ່າສະຫງວນ, ແຫຼ່ງທ່ອງທ່ຽວ, ເຂດຄົ້ນຄວ້າ ແລະ ບໍລິການຂອງຂະແໜງການ, ເຂດປ້ອງກັນຊາດ-ປ້ອງກັນຄວາມສະຫງົບ.

**ມາດຕາ 4 ນະໂຍບາຍຂອງລັດ.**

ອີງການປົກຄອງແຂວງຊຸກຍູ້, ສົ່ງເສີມທຸກພາກສ່ວນເສດຖະກິດ-ສັງຄົມ, ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງພາຍໃນ ແລະ ຕ່າງປະເທດ ມີສ່ວນຮ່ວມເຂົ້າໃນການຄຸ້ມຄອງ ແລະ ປົກປັກຮັກສາເຂດສະຫງວນທາງຫຼວງ ໃຫ້ມີປະສິດທິພາບ, ປະສິດທິຜົນ;

ອົງການປົກຄອງແຂວງປົກປ້ອງ ແລະ ຮັບປະກັນສິດຜົນປະໂຫຍດຂອງຜູ້ໄດ້ຮັບສິດນຳໃຊ້ເຂດສະຫງວນທາງຫຼວງ ທີ່ຖືກຕ້ອງຕາມກົດໝາຍ;

ອົງການປົກຄອງແຂວງຊຸກຍູ້, ສົ່ງເສີມ ໃຫ້ມີການແລກປ່ຽນບົດຮຽນ ເຕັກນິກວິຊາການ ທັງພາຍໃນ ແລະ ຕ່າງປະເທດ ເພື່ອຍາດແຍ່ງທຶນຮອນ ເຂົ້າໃນການພັດທະນາ ວຽກງານຄຸ້ມຄອງ ແລະ ປົກປັກຮັກສາເຂດສະຫງວນທາງຫຼວງ.

**ມາດຕາ 5 ຫຼັກການເຄື່ອນໄຫວ**

ການຄຸ້ມຄອງ ແລະ ປົກປັກຮັກສາເຂດສະຫງວນທາງຫຼວງ ເຄື່ອນໄຫວຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບແນວທາງນະໂຍບາຍ, ລັດຖະທຳມະນູນ, ກົດໝາຍ, ນິຕິກຳໃຕ້ກົດໝາຍ;

2. ສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ ວາງອອກ ແລະ ສະພາບເງື່ອນໄຂຄວາມເປັນຈິງຂອງແຂວງ ແຕ່ລະໄລຍະ;
3. ມີການປະສານສົມທົບກັບພາກສ່ວນກ່ຽວຂ້ອງ ແລະ ມີສ່ວນຮ່ວມຂອງປະຊາຊົນໃນສັງຄົມ;
4. ຮັບປະກັນຄວາມສະຫງົບ, ເປັນລະບຽບຮຽບຮ້ອຍ, ສວຍງາມ, ສະດວກສະບາຍ ແລະ ປອດໄພ.

**ມາດຕາ 6 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ທີ່ເຄື່ອນໄຫວ ແລະ ພົວພັນເຖິງວຽກງານຄຸ້ມຄອງ ແລະ ປົກປັກຮັກສາເຂດສະຫງວນທາງຫຼວງ ພາຍໃນແຂວງສະຫວັນນະເຂດ.

## ໝວດທີ 2

## ປະເພດ, ເຂດສະຫງວນ ແລະ ການປັກຫຼັກໝາຍເຂດສະຫງວນທາງຫຼວງ

**ມາດຕາ 7 ປະເພດຂອງທາງຫຼວງ**

ທາງຫຼວງພາຍໃນແຂວງສະຫວັນນະເຂດ ປະກອບມີ 06 ປະເພດ ຄື:

1. ທາງຫຼວງແຫ່ງຊາດ;
2. ທາງຫຼວງແຂວງ;
3. ທາງຫຼວງເມືອງ;
4. ທາງຊົນນະບົດ;
5. ທາງຕົວເມືອງ;
6. ທາງສະເພາະ.

**ມາດຕາ 8 ເຂດສະຫງວນທາງຫຼວງແຫ່ງຊາດພາຍໃນແຂວງ**

ທາງຫຼວງແຫ່ງຊາດ ພາຍໃນແຂວງ ປະກອບມີ: ເຂດສະຫງວນ ຢູ່ໜ້າດິນ ສອງຂ້າງທາງ ມີຄວາມກວ້າງເບື້ອງລະ ຊາວຫ້າ ແມັດ ນັບແຕ່ໃຈກາງທາງອອກໄປ;

ກໍລະນີເສັ້ນທາງຜ່ານເຂດພູດອຍ ພື້ນທີ່ສູງຊັນ, ເປັນເຫວເລິກ ແລະ ຜ່ານຂົວ ກະຊວງ ໂຍທາທິການ ແລະ ຂົນສົ່ງ ເປັນຜູ້ກຳນົດ ໂດຍອີງໃສ່ ພູມສັນຖານຕົວຈິງ ຂອງແຕ່ລະພື້ນທີ່.

**ມາດຕາ 9 ເຂດສະຫງວນທາງຫຼວງແຂວງ ພາຍໃນແຂວງ**

ທາງຫຼວງແຂວງ ພາຍໃນແຂວງ ປະກອບມີ: ເຂດສະຫງວນຢູ່ໜ້າດິນສອງຂ້າງທາງ ມີຄວາມກວ້າງເບື້ອງລະ ສິບຫ້າ ແມັດ ນັບແຕ່ໃຈກາງທາງອອກໄປ;

ກໍລະນີເສັ້ນທາງຜ່ານເຂດພູດອຍ ພື້ນທີ່ສູງຊັນ, ເປັນເຫວເລິກ ແລະ ຜ່ານຂົວ ພະແນກ ໂຍທາທິການ ແລະ ຂົນສົ່ງ ເປັນຜູ້ກຳນົດ ໂດຍອີງໃສ່ ພູມສັນຖານຕົວຈິງ ຂອງແຕ່ລະພື້ນທີ່.

**ມາດຕາ 10 ເຂດສະຫງວນທາງຫຼວງເມືອງ ພາຍໃນແຂວງ**

ທາງຫຼວງເມືອງ ພາຍໃນແຂວງ ປະກອບມີ: ເຂດສະຫງວນຢູ່ໜ້າດິນສອງຂ້າງທາງ ມີຄວາມກວ້າງເບື້ອງລະ ສິບແມັດ ນັບແຕ່ໃຈກາງທາງອອກໄປ;

ກໍລະນີເສັ້ນທາງຜ່ານເຂດພູດອຍ ພື້ນທີ່ສູງຊັນ, ເປັນເຫວເລິກ ແລະ ຜ່ານຂົວ ພະແນກ ໂຍທາທິການ ແລະ ຂົນສົ່ງ ເປັນຜູ້ກຳນົດ ໂດຍອີງໃສ່ ພູມສັນຖານຕົວຈິງ ຂອງແຕ່ລະພື້ນທີ່.

**ມາດຕາ 11 ເຂດສະຫງວນທາງຊົນນະບົດ ພາຍໃນແຂວງ**

ທາງຊົນນະບົດ ພາຍໃນແຂວງ ປະກອບມີ: ເຂດສະຫງວນຢູ່ໜ້າດິນ ສອງຂ້າງທາງ ມີຄວາມກວ້າງເບື້ອງລະ ຫ້າ ແມັດ ນັບແຕ່ໃຈກາງທາງອອກໄປ;

ກໍລະນີເສັ້ນທາງຜ່ານເຂດພູດອຍ ພື້ນທີ່ສູງຊັນ, ເປັນເຫວເລິກ ແລະ ຜ່ານຂົວ ຫ້ອງການ ໂຍທາທິການ ແລະ ຂົນສົ່ງ ເມືອງ, ນະຄອນ ເປັນຜູ້ກຳນົດ ໂດຍອີງໃສ່ ພູມສັນຖານຕົວຈິງ ຂອງແຕ່ລະພື້ນທີ່.

**ມາດຕາ 12 ເຂດສະຫງວນທາງຕົວເມືອງ ພາຍໃນແຂວງ**

ທາງຕົວເມືອງໃນເທດສະບານເມືອງ, ນະຄອນ ໃນແຂວງສະຫວັນນະເຂດ ເຂດສະຫງວນຢູ່ໜ້າດິນ ແມ່ນປະຕິບັດຕາມແຜນຜັງເມືອງ, ນະຄອນ ທີ່ຖືກຮັບຮອງ.

**ມາດຕາ 13 ເຂດສະຫງວນທາງສະເພາະ ພາຍໃນແຂວງ**

ທາງສະເພາະ ພາຍໃນແຂວງ ເຂດສະຫງວນຢູ່ໜ້າດິນ ສອງຂ້າງທາງ ນັບແຕ່ໃຈກາງທາງອອກໄປ ແມ່ນປະຕິບັດຕາມຈຸດພິເສດສະເພາະຂອງແຕ່ລະເສັ້ນທາງ.

(ລາຍລະອຽດແຕ່ລະປະເພດເສັ້ນທາງ ແຕ່ ມາດຕາ 8 ຫາ ມາດຕາ 13 ມີເອກະສານຊ້ອນທ້າຍ)

**ມາດຕາ 14 ເຂດສະຫງວນທາງເທິງໜ້າດິນ ແລະ ໃຕ້ດິນ**

ເຂດສະຫງວນທາງເທິງໜ້າດິນຂອງທາງຫຼວງແຕ່ລະປະເພດ ມີລວງສູງ ຫ້າ ແມັດ ນັບແຕ່ໜ້າທາງລົດແລ່ນ, ໜ້າທາງຄົນຍ່າງ ແລະ ໜ້າຂົວ;

ເຂດສະຫງວນທາງໃຕ້ດິນຂອງທາງຫຼວງ ແມ່ນເຂດສະຫງວນໄວ້ ເພື່ອປ້ອງກັນຄວາມປອດໄພ ແລະ ເຮັດກິດຈະການໃດໜຶ່ງ ຢູ່ໃຕ້ພື້ນທາງ ເຊັ່ນ: ທາງຍ່າງ, ທໍ່ນໍ້າປະປາ, ສາຍໂທລະສັບ, ສາຍໄຟຟ້າ, ທໍ່ສົ່ງນໍ້າມັນ, ທໍ່ສົ່ງແກັສ, ແລະ ອື່ນໆ.

**ມາດຕາ 15 ການປັກຫຼັກໝາຍເຂດສະຫງວນທາງຫຼວງ**

ທາງຫຼວງແຕ່ລະປະເພດ ຕ້ອງໄດ້ຕິດຕັ້ງຫຼັກໝາຍເຂດສະຫງວນທາງຫຼວງ ຢູ່ໜ້າດິນສອງຂ້າງທາງ ທຸກໆໄລຍະ ສອງຮ້ອຍ ແມັດ ຕາມລວງຍາວຂອງເສັ້ນທາງ.

## ໝວດທີ 3
## ອົງປະກອບທາງຫຼວງ ແລະ ການປົກປັກຮັກສາ

**ມາດຕາ 16 ອົງປະກອບທາງຫຼວງ.**

ທາງຫຼວງ ມີອົງປະກອບ ດັ່ງນີ້:

1. ໂຄງປະກອບ ປະກອບດ້ວຍ: ໜ້າທາງ, ບ່າທາງ, ທາງຄົນຍ່າງ, ທໍ່ລະບາຍນໍ້າ, ຮ່ອງລະບາຍນໍ້າ, ຕະລິ່ງທາງ, ຝາກັ້ນດິນ, ກຳແພງຕ້ານເຈື່ອນ, ຂົວ, ອຸໂມງ, ສະຖານທີ່ຈອດລົດຊົ່ວຄາວ ແລະ ອື່ນໆ;
2. ສິ່ງປະກອບ ປະກອບດ້ວຍ: ປ້າຍຈະລາຈອນ, ເຄື່ອງໝາຍຈະລາຈອນ, ໄຟອຳນາດ, ລະບົບແສງສະຫວ່າງ, ຮາວກັນຕົກ, ຫຼັກປ້ອງກັນອັນຕະລາຍ, ຫຼັກໝາຍເຂດສະຫງວນທາງຫຼວງ ແລະ ອື່ນໆ;
3. ສິ່ງອຳນວຍຄວາມສະດວກ ແລະ ປ້ອງກັນຄວາມປອດໄພໃນການສັນຈອນ ປະກອບດ້ວຍ: ສິ່ງກໍ່ສ້າງເພື່ອກຳຈັດ, ຕ້ານ ແລະ ຫຼຸດຜ່ອນມົນລະພາວະເປັນພິດ ເຊັ່ນ: ຄວັນ, ສີ, ແສງ, ສຽງ ແລະ ອື່ນໆ.

**ມາດຕາ 17 ການປົກປັກຮັກສາອົງປະກອບທາງຫຼວງ**

1. ອົງການຄຸ້ມຄອງເຂດສະຫງວນທາງຫຼວງເປັນເຈົ້າການ ເກັບກຳ, ຕິດຕາມ, ກວດກາ, ສ້າງແຜນບູລະນະຮັກສາ, ພັດທະນາອົງປະກອບທາງຫຼວງ ຢ່າງເປັນປົກກະຕິ;
2. ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ, ຫົວໜ່ວຍທຸລະກິດ ທັງພາຍໃນແລະ ຕ່າງປະເທດ ມີສ່ວນຮ່ວມປະກອບສ່ວນຢ່າງຕັ້ງໜ້າ ເຂົ້າໃນການຄຸ້ມຄອງ, ປົກປັກຮັກສາ ແລະ ພັດທະນາອົງປະກອບຂອງທາງຫຼວງ.

## ໝວດທີ 4
## ການຄຸ້ມຄອງ ແລະ ນຳໃຊ້ເຂດສະຫງວນທາງຫຼວງ

**ມາດຕາ 18 ການຄຸ້ມຄອງ**

ການຄຸ້ມຄອງເຂດສະຫງວນທາງຫຼວງ ແມ່ນການສຳຫຼວດ ປັກຫຼັກໝາຍຂອບເຂດສະຫງວນທາງຫຼວງ, ຂອບເຂດພື້ນທີ່ດິນທາງຫຼວງແຕ່ລະປະເພດ ເພື່ອສະຫງວນໄວ້ ນຳໃຊ້ເຂົ້າໃນກິດຈະການທາງຫຼວງ ແລະ ປົກປັກຮັກສາພື້ນທີ່ ດັ່ງກ່າວ ບໍ່ໃຫ້ມີການບຸກລຸກ, ລ່ວງລໍ້າ ຫຼື ນຳໃຊ້ໄປສູ່ເປົ້າໝາຍອື່ນໆ ໂດຍບໍ່ໄດ້ຮັບອະນຸຍາດ, ພ້ອມທັງມີວິທີການ ແລະ ມາດຕາການຕໍ່ຜູ້ລະເມີດ.

**ມາດຕາ 19 ກິດຈະການກໍ່ສ້າງທີ່ມີມາກ່ອນ**

ກິດຈະການກໍ່ສ້າງທຸກປະເພດ ທີ່ໄດ້ກໍ່ສ້າງ ໃນພື້ນທີ່ຂອບເຂດສະຫງວນທາງຫຼວງ ກ່ອນການປະກາດໃຊ້ຂໍ້ຕົກລົງສະບັບນີ້ ຕ້ອງປະຕິບັດດັ່ງນີ້:

1. ການກໍ່ສ້າງ ເພື່ອຮັບໃຊ້ສາທາລະນະປະໂຫຍດ ເຊັ່ນ: ການຕິດຕັ້ງເສົາໄຟຟ້າ, ລະບົບໂທລະຄົມ-ສື່ສານ, ປ້າຍໂຄສະນາ, ລະບົບນໍ້າປະປາ ແລະ ອື່ນໆ; ອົງການຄຸ້ມຄອງທາງຫຼວງແຕ່ລະຂັ້ນຕ້ອງໄດ້ສົມທົບກັບເຈົ້າຂອງກິດຈະການ ກວດກາຄືນ; ກໍລະນີມີການຮື້ຖອນ, ຍົກຍ້າຍ ຄ່າໃຊ້ຈ່າຍ ແມ່ນເຈົ້າຂອງກິດຈະການດັ່ງກ່າວເປັນຜູ້ຮັບຜິດຊອບ;
2. ການກໍ່ສ້າງ ທີ່ມີຜົນກະທົບ, ມີຄວາມສ່ຽງ, ເປັນອຸປະສັກ-ກີດຂວາງ ຕໍ່ໂຄງສ້າງ ໃນຂອບເຂດສະຫງວນທາງຫຼວງ ເຊັ່ນ: ການປຸກສ້າງຫ້າງຮ້ານ, ຕໍ່ເຕີມ, ຮົ້ວກຳແພງ, ທາງເຂົ້າ-ອອກ, ຂຸດ-ຖົມດິນ ແລະ ອື່ນໆ ອົງການຄຸ້ມຄອງທາງຫຼວງ ຕ້ອງເຮັດບົດບັນທຶກ ຮ່ວມກັບເຈົ້າຂອງກິດຈະການ; ກໍລະນີມີການຮື້ຖອນ, ຍົກຍ້າຍ ຕ້ອງປະຕິບັດຕາມ ດຳລັດ ເລກທີ 84/ລບ, ລົງວັນທີ 05 ເມສາ 2016 ວ່າດ້ວຍການທົດແທນຄ່າເສຍຫາຍ ແລະ ການຈັດສັນຍົກຍ້າຍປະຊາຊົນ ຈາກໂຄງການພັດທະນາ;

**ມາດຕາ 20 ການກໍ່ສ້າງທາງເຂົ້າ-ອອກ**

ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ທີ່ມີຈຸດປະສົງ ກໍ່ສ້າງທາງເຂົ້າ-ອອກ ເຮືອນ, ຫ້າງຮ້ານ, ໂຮງຮຽນ, ໂຮງໝໍ, ສຸກສະລາ, ວັດ, ໂບດ, ຫ້ອງການສຳນັກງານ, ໂຮງງານ ແລະ ອື່ນໆ ທີ່ນອນຢູ່ໃນຂອບເຂດສະຫງວນທາງຫຼວງ ຕ້ອງປະຕິບັດຕາມກຳນົດໝາຍເຕັກນິກຂອງ ກະຊວງໂຍທາທິການ ແລະ ຂົນສົ່ງ ສະບັບເລກທີ 18723/ຍທຂ, ລົງວັນທີ 20 ສິງຫາ 2018.

**ມາດຕາ 21 ກິດຈະການກໍ່ສ້າງໃໝ່**

ກິດຈະການກໍ່ສ້າງໃໝ່ ເຊັ່ນ: ການກໍ່ສ້າງອາຄານ, ເຮືອນ, ຫ້າງຮ້ານ, ໂຮງຮຽນ, ໂຮງໝໍ, ສຸກສະລາ, ວັດ, ຫ້ອງການສຳນັກງານ, ໂຮງງານ ແລະ ອື່ນໆ ຂອງບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ແມ່ນໃຫ້ປະຕິບັດຕາມຂໍ້ຕົກລົງ ສະບັບເລກທີ 2937/ຈຂ.ສຂ, ລົງວັນທີ 28 ທັນວາ 2018 ວ່າດ້ວຍການຄຸ້ມຄອງການປຸກສ້າງ ພາຍໃນແຂວງສະຫວັນນະເຂດ.

**ມາດຕາ 22 ການອະນຸຍາດນຳໃຊ້ເຂດສະຫງວນທາງຫຼວງ**

ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ມີຈຸດປະສົງກໍ່ສ້າງກິດຈະການໃດໜຶ່ງ ເຊັ່ນ : ກໍ່ສ້າງທາງເຂົ້າ-ອອກ, ທໍ່ລະບາຍນໍ້າ, ຮ່ອງລະບາຍນໍ້າ, ກິດຈະການຊົ່ວຄາວ ແລະ ອື່ນໆ ຕ້ອງໄດ້ຮັບອະນຸຍາດຈາກອົງການຄຸ້ມຄອງເຂດສະຫງວນທາງຫຼວງແຕ່ລະຂັ້ນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 27 ຂອງຂໍ້ຕົກລົງສະບັບນີ້.

## ໝວດທີ 5
## ສິດ, ພັນທະ ຂອງຜູ້ໄດ້ຮັບອະນຸຍາດນຳໃຊ້ເຂດສະຫງວນທາງຫຼວງ

**ມາດຕາ 23 ສິດ, ພັນທະ**

ຜູ້ໄດ້ຮັບອະນຸຍາດນຳໃຊ້ເຂດສະຫງວນທາງຫຼວງມີສິດ ດັ່ງນີ້:

1. ນຳໃຊ້ເຂດສະຫງວນທາງຫຼວງ ຕາມຈຸດປະສົງ ໃນຂອບເຂດທີ່ໄດ້ຮັບອະນຸຍາດ;
2. ປົກປັກຮັກສາພື້ນທີ່ເຂດສະຫງວນທາງຫຼວງ ທີ່ຕົນໄດ້ຮັບອະນຸຍາດນຳໃຊ້ ໃຫ້ຢູ່ໃນສະພາບດີ;
3. ເປັນເຈົ້າການ ອຳນວຍຄວາມສະດວກ, ໃຫ້ການຮ່ວມມື, ສະໜອງຂໍ້ມູນຂ່າວສານ ໃຫ້ອົງການຄຸ້ມຄອງທາງຫຼວງເຂດສະຫງວນທາງຫຼວງ;
4. ກໍລະນີ ພົບເຫັນ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ມີພຶດຕິກຳອັນຈະນຳໄປສູ່ການມ້າງເພທຳລາຍ, ສ້າງຄວາມເສຍຫາຍ ຕໍ່ອົງປະກອບຂອງທາງຫຼວງ ຕ້ອງລາຍງານຕໍ່ອົງການຄຸ້ມຄອງເຂດສະຫງວນທາງຫຼວງ;
5. ປະຕິບັດ ສິດ ແລະ ພັນທະອື່ນໆ ຕາມການມອບໝາຍ.

**ມາດຕາ 24 ຄວາມຮັບຜິດຊອບ**

ຜູ້ດຳເນີນກິດຈະການ ມີໜ້າທີ່ຄວາມຮັບຜິດຊອບ ດັ່ງນີ້:

1. ຈັດວາງແຜນຜັງການກໍ່ສ້າງໃຫ້ ສອດຄ່ອງກັບການອອກແບບເບື້ອງຕົ້ນ, ທີ່ໄດ້ຮັບອະນຸຍາດ ແລະ ຮັບປະກັນທາງດ້ານເຕັກນິກ;
2. ຈັດວາງພາຫະນະ, ເຄື່ອງມື, ວັດສະດຸ-ອຸປະກອນ ແລະ ອື່ນໆໄວ້ໃນສະຖານທີ່ໆເໝາະສົມ, ບໍ່ລົບກວນ, ບໍ່ສ້າງຄວາມເປິເປື້ອນ ແລະ ສ້າງຄວາມເສຍຫາຍໃດໆຕາມມາ;
3. ໃນເວລາດຳເນີນກິດຈະການກໍ່ສ້າງ-ສ້ອມແປງໃດໜຶ່ງ ໃນຂອບເຂດສະຫງວນທາງຫຼວງ ຜູ້ໄດ້ຮັບສິດນຳໃຊ້ ຕ້ອງເຮັດປ້າຍແນະນຳ ເພື່ອສ້າງສະຕິ ຄວາມເປັນລະບຽບຮຽບຮ້ອຍ ແລະ ປອດໄພ ໃຫ້ແກ່ການສັນຈອນຕາມທ້ອງຖະໜົນ;
4. ພາຍຫຼັງສຳເລັດການກໍ່ສ້າງ-ສ້ອມແປງຕ້ອງເກັບມ້ຽນ, ຮື້ຖອນພາຫະນະ, ເຄື່ອງມື, ອຸປະກອນ, ວັດຖຸເສດເຫຼືອ, ສິ່ງປະກອບ ແລະ ອື່ນໆ ພ້ອມທັງຮັບປະກັນຄວາມເປັນລະບຽບຮຽບຮ້ອຍ.

## ໝວດທີ 6
## ຂໍ້ຫ້າມ

**ມາດຕາ 25 ຂໍ້ຫ້າມທົ່ວໄປ**

ຫ້າມບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ພາຍໃນ ແລະ ຕ່າງປະເທດ ມີພຶດຕິກຳ ດັ່ງນີ້:

1. ດຳເນີນກິດຈະການ ການກໍ່ສ້າງ-ສ້ອມແປງ ທີ່ເປັນກິດຈະການຊົ່ວຄາວ ຫຼື ຖາວອນ ໃນຂອບເຂດສະຫງວນທາງຫຼວງ ໂດຍບໍ່ໄດ້ຮັບອະນຸຍາດ;
2. ຕິດຕັ້ງ, ແຂວນ, ວາງ, ກອງວັດຖຸ-ອຸປະກອນ, ຂຸດ-ຖົມດິນ ມີລັກສະນະກີດຂວາງ, ເປັນອັນຕະລາຍໃຫ້ແກ່ການສັນຈອນ ຕາມທ້ອງຖະໜົນ;
3. ຂີດຂຽນ, ປ່ຽນແປງ, ມ້າງ, ທຳລາຍ, ຮື້ຖອນ, ເຄື່ອນຍ້າຍ, ເຊື່ອງຊ້ອນ, ຊື້-ຂາຍ ສິ່ງປະກອບຂອງທາງຫຼວງ;
4. ດຳເນີນການຂຸດ-ຖົມດິນ ເພື່ອຈຸດປະສົງກໍ່ສ້າງກິດຈະການຊົ່ວຄາວ ຫຼື ຖາວອນ ທີ່ຈະສ້າງຄວາມເສຍຫາຍໃຫ້ແກ່ໂຄງປະກອບ ແລະ ໂຄງສ້າງຂອງທາງ;

5. ຖິ້ມຂີ້ເຫຍື້ອ, ສິ່ງເສດເຫຼືອ, ນ້ຳເປື້ອນ, ເສດຫີນ, ດິນ, ຊາຍ, ນ້ຳມັນ, ດັງໄຟ ແລະ ອື່ນໆ ໃນຂອບເຂດໆສະຫງວນທາງຫຼວງ;
6. ປິດກັ້ນລະບົບລະບາຍນ້ຳ, ປ່ຽນແປງທິດທາງການໄຫຼຂອງນ້ຳ ທີ່ມີຜົນສະທ້ອນຕໍ່ໂຄງປະກອບ ແລະ ໂຄງສ້າງຂອງທາງ ໃນຂອບເຂດໆສະຫງວນທາງຫຼວງ;
7. ຕັດ, ທຳລາຍຕົ້ນໄມ້ ໃນຂອບເຂດໆສະຫງວນທາງຫຼວງ ໂດຍບໍ່ໄດ້ຮັບອະນຸຍາດຈາກອົງການຄຸ້ມຄອງເຂດສະຫງວນທາງຫຼວງ ແລະ ຂະແໜງການທີ່ກ່ຽວຂ້ອງ;
8. ລ້ຽງ, ປ່ອຍສັດລ້ຽງທຸກປະເພດ ໃນຂອບເຂດສະຫງວນທາງຫຼວງ.

**ມາດຕາ 26 ຂໍ້ຫ້າມສຳລັບພະນັກງານ-ລັດຖະກອນ**

ຫ້າມພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ຄຸ້ມຄອງທາງຫຼວງ ມີພຶດຕິກຳ ດັ່ງນີ້:

1. ສວຍໃຊ້ສິດ, ໜ້າທີ່, ຕຳແໜ່ງ ເພື່ອຮັບຜົນປະໂຫຍດສ່ວນຕົວ ຈາກວຽກງານຄຸ້ມຄອງເຂດສະຫງວນທາງຫຼວງ;
2. ເມີນເສີຍ, ປະລະໜ້າທີ່ ວຽກງານຄຸ້ມຄອງເຂດສະຫງວນທາງຫຼວງ ທີ່ການຈັດຕັ້ງມອບໝາຍໃຫ້;
3. ປອມແປງເອກະສານກ່ຽວກັບການຄຸ້ມຄອງເຂດສະຫງວນທາງຫຼວງ;
4. ມີພຶດຕິກຳອື່ນທີ່ເປັນການລະເມີດລະບຽບ, ກົດໝາຍ.

## ໝວດທີ 7

## ອົງການຄຸ້ມຄອງ, ກວດກາ ເຂດສະຫງວນທາງຫຼວງ

**ມາດຕາ 27 ອົງການຄຸ້ມຄອງ**

ອົງການຄຸ້ມຄອງເຂດສະຫງວນທາງຫຼວງ ແມ່ນອົງການປົກຄອງແຂວງ ເປັນຜູ້ຄຸ້ມຄອງລວມສູນໃນຂອບເຂດທົ່ວແຂວງ ໂດຍມອບໃຫ້ຂະແໜງໂຍທາທິການ ແລະ ຂົນສົ່ງ ເປັນຜູ້ຮັບຜິດຊອບ ຊຶ່ງປະກອບດ້ວຍ:

1. ຂັ້ນແຂວງ ແມ່ນ ພະແນກ ໂຍທາທິການ ແລະ ຂົນສົ່ງ;
2. ຂັ້ນເມືອງ, ນະຄອນ ແມ່ນ ຫ້ອງການ ໂຍທາທິການ ແລະ ຂົນສົ່ງ ເມືອງ, ນະຄອນ;
3. ຂັ້ນບ້ານ ແມ່ນ ອົງການປົກຄອງບ້ານ.

**ມາດຕາ 28 ສິດ ໜ້າທີ່ ຂອງພະແນກໂຍທາທິການ ແລະ ຂົນສົ່ງ ແຂວງ**

ພະແນກ ໂຍທາທິການ ແລະ ຂົນສົ່ງ ມີສິດ ໜ້າທີ່ ດັ່ງນີ້:

1. ເປັນເສນາທິການໃຫ້ອົງການປົກຄອງແຂວງ ໃນການຄຸ້ມຄອງ ແລະ ປົກປັກຮັກສາເຂດສະຫງວນທາງຫຼວງ ໃນທົ່ວແຂວງ;
2. ໂຄສະນາ ເຜີຍແຜ່ກົດໝາຍ, ຂໍ້ກຳນົດ, ກົດລະບຽບ, ລະບຽບການ ກ່ຽວກັບການຄຸ້ມຄອງ ແລະ ປົກປັກຮັກສາເຂດສະຫງວນທາງຫຼວງ, ປຸກຈິດສຳນຶກໃຫ້ຊຸມຊົນເຂົ້າຮ່ວມໃນວຽກງານຄຸ້ມຄອງ ແລະ ປົກປັກຮັກສາເຂດສະຫງວນທາງຫຼວງ, ສະໜອງຂໍ້ມູນຂ່າວສານ ທີ່ເປັນປະໂຫຍດແກ່ປະຊາຊົນ ເພື່ອຮັບຮູ້ ແລະ ປະຕິບັດໃຫ້ຖືກຕ້ອງ;
3. ຄົ້ນຄວ້າ, ວາງແຜນພັດທະນາ ແລະ ອອກອະນຸຍາດ ການນຳໃຊ້ທີ່ດິນເຂດສະຫງວນທາງຫຼວງແຫ່ງຊາດ ແລະ ທາງຫຼວງແຂວງ ຕາມການແບ່ງຂັ້ນຄຸ້ມຄອງ;
4. ສະເໜີໂຈະ, ຍົກເລີກ, ປັບໃໝ ຕໍ່ຜູ້ລະເມີດ ເຂດສະຫງວນທາງຫຼວງໃນຂອບເຂດຮັບຜິດຊອບ ຕາມທີ່ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້;

5. ສະເໜີ ຍ້ອງຍໍ, ປະຕິບັດນະໂຍບາຍ ຕໍ່ຜູ້ທີ່ມີຜົນງານປະກອບສ່ວນໃນການຄຸ້ມຄອງ, ປົກປັກຮັກສາ ແລະ ພັດທະນາ ຂອບເຂດສະຫງວນທາງຫຼວງ ໃນຂອບເຂດຮັບຜິດຊອບ;
6. ເກັບກໍາຂໍ້ມູນສະຖິຕິ, ກວດກາ ການປະຕິບັດກົດໝາຍ ວ່າດ້ວຍທາງຫຼວງ, ຂໍ້ຕົກລົງ ວ່າດ້ວຍການຄຸ້ມຄອງເຂດສະຫງວນທາງຫຼວງ ໃນຂອບເຂດແຂວງ, ເມືອງ ແລະ ນະຄອນ;
7. ພົວພັນ, ປະສານສົມທົບ ກັບພາກສ່ວນກ່ຽວຂ້ອງ ເພື່ອປະຕິບັດໜ້າທີ່ ຄຸ້ມຄອງ ແລະ ປົກປັກຮັກສາເຂດສະຫງວນທາງຫຼວງໃຫ້ມີປະສິດທິຜົນ;
8. ຕິດຕາມ, ກວດກາ, ວາງແຜນຄຸ້ມຄອງນໍາໃຊ້ເຂດສະຫງວນທາງຫຼວງແຫ່ງຊາດ, ທາງຫຼວງຂອງແຂວງ ເພື່ອການພັດທະນາ ໃຫ້ສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ຂອງແຂວງ ແຕ່ລະໄລຍະ;
9. ກ່າວເຕືອນ, ສຶກສາອົບຮົມ, ປະຕິບັດວິໄນ ແລະ ນໍາໃຊ້ມາດຕາການ ຢ່າງເໝາະສົມຕໍ່ຜູ້ລະເມີດຂອບເຂດສະຫງວນທາງຫຼວງ;
10. ສະຫຼຸບ, ລາຍງານຜົນຂອງການຈັດຕັ້ງປະຕິບັດວຽກງານການຄຸ້ມຄອງ ແລະ ປົກປັກຮັກສາເຂດສະຫງວນທາງຫຼວງ ແຕ່ລະໄລຍະ ເປັນປົກກະຕິ;
11. ປັກຫຼັກໝາຍຂອບເຂດສະຫງວນທາງຫຼວງ ໃນທົ່ວແຂວງສະຫວັນນະເຂດ;
12. ປະຕິບັດ ສິດ ໜ້າທີ່ອື່ນຕາມການມອບໝາຍ.

**ມາດຕາ 29 ສິດ ໜ້າທີ່ຂອງຫ້ອງການ ໂຍທາທິການ ແລະ ຂົນສົ່ງ ເມືອງ, ນະຄອນ**

ຫ້ອງການ ໂຍທາທິການ ແລະ ຂົນສົ່ງ ເມືອງ, ນະຄອນ ມີສິດ ໜ້າທີ່ ດັ່ງນີ້:

1. ເປັນເສນາທິການໃຫ້ອົງການປົກຄອງເມືອງ, ນະຄອນ, ພະແນກ ໂຍທາທິການ ແລະ ຂົນສົ່ງ ແຂວງ ໃນການຄຸ້ມຄອງ ແລະ ປົກປັກຮັກສາເຂດສະຫງວນທາງຫຼວງ ພາຍໃນຂອບເຂດເມືອງ, ນະຄອນ ຂອງຕົນ;
2. ໂຄສະນາ ເຜີຍແຜ່ກົດໝາຍ, ຂໍ້ກໍານົດ, ກົດລະບຽບ, ລະບຽບການ ກ່ຽວກັບການຄຸ້ມຄອງ ແລະ ປົກປັກຮັກສາເຂດສະຫງວນທາງຫຼວງ, ປຸກຈິດສໍານຶກໃຫ້ຊຸມຊົນເຂົ້າຮ່ວມໃນວຽກງານຄຸ້ມຄອງ ແລະ ປົກປັກຮັກສາເຂດສະຫງວນທາງຫຼວງ, ສະໜອງຂໍ້ມູນຂ່າວສານ ທີ່ເປັນປະໂຫຍດແກ່ປະຊາຊົນ ເພື່ອຮັບຮູ້ ແລະ ປະຕິບັດໃຫ້ຖືກຕ້ອງໃນຂອບເຂດຂອງເມືອງ, ນະຄອນ;
3. ຄົ້ນຄວ້າ, ວາງແຜນພັດທະນາ ແລະ ອອກອະນຸຍາດ ການນໍາໃຊ້ທີ່ດິນເຂດສະຫງວນທາງຫຼວງຂອງເມືອງ ແລະ ຊົນນະບົດ ຕາມການແບ່ງຂັ້ນຄຸ້ມຄອງ;
4. ສະເໜີໂຈະ, ຍົກເລີກ, ປັບໄໝ ຕໍ່ຜູ້ລະເມີດ ເຂດສະຫງວນທາງຫຼວງໃນຂອບເຂດຮັບຜິດຊອບ ແຕ່ລະກໍລະນີ ຕາມທີ່ກໍານົດໄວ້ໃນຂໍ້ຕົກລົງສະບັບນີ້;
5. ສະເໜີ ຍ້ອງຍໍ, ປະຕິບັດນະໂຍບາຍ ຕໍ່ຜູ້ທີ່ມີຜົນງານປະກອບສ່ວນໃນການຄຸ້ມຄອງ, ປົກປັກຮັກສາ ແລະ ພັດທະນາ ຂອບເຂດສະຫງວນທາງຫຼວງ ໃນຂອບເຂດຮັບຜິດຊອບ;
6. ເກັບກໍາຂໍ້ມູນສະຖິຕິ, ກວດກາ ການປະຕິບັດກົດໝາຍ ວ່າດ້ວຍທາງຫຼວງ, ຂໍ້ຕົກລົງ ວ່າດ້ວຍການຄຸ້ມຄອງເຂດສະຫງວນທາງຫຼວງ ໃນຂອບເຂດເມືອງ ແລະ ນະຄອນ;
7. ພົວພັນ, ປະສານສົມທົບ ກັບພາກສ່ວນກ່ຽວຂ້ອງ ເພື່ອປະຕິບັດໜ້າທີ່ ຄຸ້ມຄອງ ແລະ ປົກປັກຮັກສາເຂດສະຫງວນທາງຫຼວງໃຫ້ມີປະສິດທິຜົນ;

8. ຕິດຕາມ, ກວດກາ, ວາງແຜນຄຸ້ມຄອງນໍາໃຊ້ເຂດສະຫງວນທາງຫຼວງ ໃນຂອບເຂດເມືອງ, ນະຄອນ ເພື່ອການພັດທະນາ ໃຫ້ສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ, ເມືອງ, ນະຄອນ ແຕ່ລະໄລຍະ;
9. ກ່າວເຕືອນ, ສຶກສາອົບຮົມ, ປະຕິບັດວິໄນ ແລະ ນໍາໃຊ້ມາດຕາການ ຢ່າງເໝາະສົມຕໍ່ຜູ້ລະເມີດຂອບເຂດສະຫງວນທາງຫຼວງ ໃນຄວາມຮັບຜິດຊອບຂອງຕົນ;
10. ສະຫຼຸບ, ລາຍງານຜົນຂອງການຈັດຕັ້ງປະຕິບັດວຽກງານການຄຸ້ມຄອງ ແລະ ປົກປັກຮັກສາເຂດສະຫງວນທາງຫຼວງ ແຕ່ລະໄລຍະ ເປັນປົກກະຕິ;
11. ປະຕິບັດ ສິດ ໜ້າທີ່ອື່ນຕາມການມອບໝາຍ.

**ມາດຕາ 30 ສິດ ໜ້າທີ່ ຂອງອົງການປົກຄອງບ້ານ**

ອົງການປົກຄອງບ້ານ ມີສິດ ໜ້າທີ່ ດັ່ງນີ້:

1. ເປັນເສນາທິການໃຫ້ອົງການປົກຄອງເມືອງ, ນະຄອນ, ຫ້ອງການ ໂຍທາທິການ ແລະ ຂົນສົ່ງເມືອງ, ນະຄອນ ໃນການຄຸ້ມຄອງ ແລະ ປົກປັກຮັກສາເຂດສະຫງວນທາງຫຼວງ ໃນຂອບເຂດບ້ານ;
2. ໂຄສະນາ ເຜີຍແຜ່ກົດໝາຍ, ຂໍ້ກໍານົດ, ກົດລະບຽບ, ລະບຽບການ ທີ່ພົວພັນເຖິງການຄຸ້ມຄອງ ແລະ ປົກປັກຮັກສາເຂດສະຫງວນທາງຫຼວງ ເພື່ອສ້າງສະຕິເຄົາລົບ ແລະ ປະຕິບັດກົດໝາຍ ໃຫ້ປະຊາຊົນພາຍໃນບ້ານ;
3. ຮ່ວມກັບ ຫ້ອງການ ໂຍທາທິການ ແລະ ຂົນສົ່ງເມືອງ, ນະຄອນ ເພື່ອຕິດຕາມ, ກວດກາ ແລະ ຢັ້ງຢືນຄວາມຖືກຕ້ອງການຂໍອະນຸຍາດນໍາໃຊ້ ເຂດສະຫງວນທາງຫຼວງ;
4. ສະເໜີໂຈະ, ຍົກເລີກ, ປັບໃໝ ຕໍ່ຜູ້ລະເມີດ ເຂດສະຫງວນທາງຫຼວງພາຍໃນບ້ານ.
5. ສະເໜີ ຍ້ອງຍໍ, ປະຕິບັດນະໂຍບາຍ ຕໍ່ຜູ້ທີ່ມີຜົນງານປະກອບສ່ວນໃນການຄຸ້ມຄອງ, ປົກປັກຮັກສາ ແລະ ພັດທະນາ ຂອບເຂດສະຫງວນທາງຫຼວງພາຍໃນບ້ານ;
6. ຮ່ວມກັບ ຫ້ອງການ ໂຍທາທິການ ແລະ ຂົນສົ່ງເມືອງ, ນະຄອນ ໃນການຕິດຕາມ, ກວດກາ ຄວາມເປັນລະບຽບຮຽບຮ້ອຍ, ແກ້ໄຂຂໍ້ຂັດແຍ່ງ ໃນຂອບເຂດບ້ານ;
7. ລາຍງານສະພາບການນໍາໃຊ້ເຂດສະຫງວນທາງຫຼວງພາຍໃນບ້ານ ໃຫ້ຫ້ອງການ ໂຍທາທິການ ແລະ ຂົນສົ່ງເມືອງ, ນະຄອນ ແລະ ອົງການປົກຄອງເມືອງ, ນະຄອນ ເປັນປົກກະຕິ;
8. ປະຕິບັດ ສິດ ໜ້າທີ່ອື່ນຕາມການມອບໝາຍ.

**ມາດຕາ 31 ອົງການກວດກາ**

ອົງການກວດກາ ວຽກງານຄຸ້ມຄອງເຂດສະຫງວນທາງຫຼວງ ປະກອບດ້ວຍ ອົງການກວດກາພາຍໃນ ແລະ ອົງການກວດກາພາຍນອກ.

ອົງການກວດກາພາຍໃນ ແມ່ນອົງການດຽວກັນກັບອົງການຄຸ້ມຄອງເຂດສະຫງວນທາງຫຼວງທີ່ກໍານົດໄວ້ ໃນມາດຕາ 27 ຂໍ້ຕົກລົງສະບັບນີ້;

ອົງການກວດກາພາຍນອກ ປະກອບມີ ສະພາປະຊາຊົນແຂວງ, ອົງການກວດກາລັດແຂວງ, ອົງການກວດສອບປະຈໍາພາກພາງ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ, ອົງການຈັດຕັ້ງມະຫາຊົນ, ປະຊາຊົນ ແລະ ສື່ມວນຊົນ ຕາມ ສິດ ໜ້າທີ່ ແລະ ພາລະບົດບາດ ເຊິ່ງກໍານົດໄວ້ໃນກົດໝາຍ ແລະ ລະບຽບການສະເພາະ.

**ມາດຕາ 32 ເນື້ອໃນກວດກາ**

ເນື້ອໃນກວດກາ ມີດັ່ງນີ້:

1. ກວດກາການປະຕິບັດກົດໝາຍ, ນະໂຍບາຍ, ຂໍ້ຕົກລົງ, ລະບຽບການ ກ່ຽວກັບການຄຸ້ມຄອງເຂດສະຫງວນທາງຫຼວງ;
2. ກວດກາການຄຸ້ມຄອງ ແລະ ການອະນຸຍາດນຳໃຊ້ຂອບເຂດສະຫງວນທາງຫຼວງ ໃຫ້ສອດຄ່ອງກັບກົດໝາຍທາງຫຼວງ ແລະ ຂໍ້ຕົກລົງສະບັບນີ້;
3. ກວດກາການປະຕິບັດ ສິດ ໜ້າທີ່ ແລະ ຄວາມຮັບຜິດຊອບຂອງອົງການຄຸ້ມຄອງເຂດສະຫງວນທາງຫຼວງ ແຕ່ລະຂັ້ນ ທີ່ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້;
4. ກວດກາຕາມການສະເໜີ, ຮ້ອງຟ້ອງ ທີ່ພົວພັນເຖິງການຄຸ້ມຄອງເຂດສະຫງວນທາງຫຼວງ.

**ມາດຕາ 33 ຮູບການກວດກາ**

ຮູບການກວດກາ ການຄຸ້ມຄອງເຂດສະຫງວນທາງຫຼວງ ມີດັ່ງນີ້:

1. ກວດກາປົກກະຕິ;
2. ກວດກາຕາມຄຳສັ່ງ ຫຼື ຄຳຮ້ອງ-ຄຳສະເໜີ;
3. ກວດກາແບບກະທັນຫັນ.

## ໝວດທີ 8
## ການແກ້ໄຂຂໍ້ຂັດແຍ່ງ

**ມາດຕາ 34 ຮູບການແກ້ໄຂຂໍ້ຂັດແຍ່ງ**

ການແກ້ໄຂຂໍ້ຂັດແຍ່ງ ປະກອບດ້ວຍຮູບການ ດັ່ງນີ້:

1. ການໄກ່ເກ່ຍ ຫຼື ການປະນີປະນອມ;
2. ການແກ້ໄຂທາງດ້ານບໍລິຫານ;
3. ການແກ້ໄຂໂດຍຄະນະກຳມະການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;
4. ການຕັດສິນຂອງສານ;
5. ການແກ້ໄຂທີ່ມີລັກສະນະສາກົນ.

**ມາດຕາ 35 ການໄກ່ເກ່ຍ ຫຼື ການປະນີປະນອມ**

ໃນກໍລະນີ ເກີດຂໍ້ຂັດແຍ່ງກ່ຽວກັບການຄຸ້ມຄອງເຂດສະຫງວນທາງຫຼວງ ຄູ່ກໍລະນີ ສາມາດເຈລະຈາ, ໄກ່ເກ່ຍ ຫຼື ປະນີປະນອມກັນ.

**ມາດຕາ 36 ການແກ້ໄຂທາງດ້ານບໍລິຫານ**

ໃນກໍລະນີເກີດຂໍ້ຂັດແຍ່ງກ່ຽວກັບການຄຸ້ມຄອງເຂດສະຫງວນທາງຫຼວງ ຄູ່ກໍລະນີ ບໍ່ສາມາດໄກ່ເກ່ຍດ້ວຍວິທີປະນີປະນອມກັນໄດ້, ຝ່າຍໃດໜຶ່ງມີສິດສະເໜີຕໍ່ ອົງການຄຸ້ມຄອງເຂດສະຫງວນທາງຫຼວງ ບ່ອນຕົນໄດ້ຮັບອະນຸຍາດນັ້ນ ເປັນຜູ້ແກ້ໄຂ.

**ມາດຕາ 37 ການແກ້ໄຂໂດຍຄະນະກຳມະການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ**

ໃນກໍລະນີເກີດຂໍ້ຂັດແຍ່ງກ່ຽວກັບການດຳເນີນທຸລະກິດ ທີ່ພົວພັນເຖິງເຂດສະຫງວນທາງຫຼວງ ຄູ່ກໍລະນີຝ່າຍໃດໜຶ່ງ ມີສິດສະເໜີຕໍ່ອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເພື່ອພິຈາລະນາແກ້ໄຂ.

**ມາດຕາ 38 ການຕັດສິນຂອງສານ**

ໃນກໍລະນີ ຂໍ້ຂັດແຍ່ງກ່ຽວກັບການຄຸ້ມຄອງເຂດສະຫງວນທາງຫຼວງ ຄູ່ກໍລະນີຝ່າຍໃດໜຶ່ງ ມີສິດຮ້ອງຟ້ອງຕໍ່ສານປະຊາຊົນ ເພື່ອພິຈາລະນາຕັດສິນຕາມກົດໝາຍ.

**ມາດຕາ 39 ການແກ້ໄຂທີ່ມີລັກສະນະສາກົນ.**

ໃນກໍລະນີ ເກີດຂໍ້ຂັດແຍ່ງທີ່ມີລັກສະນະສາກົນ ກ່ຽວກັບການຄຸ້ມຄອງເຂດສະຫງວນທາງຫຼວງ ໃຫ້ປະຕິບັດຕາມສົນທິສັນຍາ ແລະ ສັນຍາສາກົນທີ່ ສປປ ລາວ ເປັນພາຄີ.

## ໝວດທີ 9
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 40 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ມີຜົນງານປະກອບສ່ວນເຂົ້າໃນການຄຸ້ມຄອງ ແລະ ປົກປັກຮັກສາເຂດສະຫງວນທາງຫຼວງ ຈະໄດ້ຮັບການສັນລະເສີນ, ຍ້ອງຍໍ ແລະ ປະຕິບັດນະໂຍບາຍ ຕາມຄວາມເໝາະສົມ.

**ມາດຕາ 41 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ ສະຖານ ໜັກ ຫຼື ເບົາ ຕາມລະບຽບ ກົດໝາຍ.

## ໝວດທີ 10
## ບົດບັນຍັດສຸດທ້າຍ

**ມາດຕາ 42 ການຈັດຕັ້ງປະຕິບັດ**

ອົງການປົກຄອງແຂວງ ມອບໃຫ້ພະແນກ ໂຍທາທິການ ແລະ ຂົນສົ່ງ, ຫ້ອງການໂຍທາທິການ ແລະ ຂົນສົ່ງ ເມືອງ, ນະຄອນ ເປັນໃຈກາງປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ ໃຫ້ມີປະສິດທິຜົນ;

ພະແນກການ, ອົງການທຽບເທົ່າຂັ້ນແຂວງ, ຂັ້ນເມືອງ-ນະຄອນ, ບ້ານ, ການຈັດຕັ້ງທີ່ກ່ຽວຂ້ອງ, ບຸກຄົນ, ນິຕິບຸກຄົນ ທັງພາຍໃນ ແລະ ຕ່າງປະເທດ ທີ່ເຄື່ອນໄຫວພາຍໃນແຂວງ ຈົ່ງຮັບຮູ້ ແລະ ປະຕິບັດຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 43 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ແລະ ພາຍຫຼັງລົງໃນຈົດໝາຍເຫດທາງລັດຖະການ ສິບຫ້າວັນ ເປັນຕົ້ນໄປ;

ຂໍ້ກຳນົດ, ຂໍ້ຕົກລົງ, ກົດລະບຽບ, ຄຳສັ່ງ, ແຈ້ງການ ທີ່ ຂັດກັບເນື້ອໃນຂໍ້ຕົກລົງສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ເຈົ້າແຂວງສະຫວັນນະເຂດ

ແຂວງ ສະຫວັນນະເຂດ

ສັນຕິພາບ ພົມວິຫານ